ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

0080 ເລກທີ /ອຄ.ກຄພນ.

ນະຄອນຫລວງວຽງຈັນ, ວັນທີ 19 ມັງກອນ 2017.

# ແຈ້ງການ

ເຖິງ : ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ, ບັນດາບໍລິສັດນ້ຳມັນເຊື້ອໄຟ.

ເລື່ອງ: ປັບຂຶ້ນລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນ ເລກທີ 70/ສພຊ, ລົງວັນທີ 15/12/2015.
- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ ເລກທີ 324/ຫລບ.ກລຂ, ລົງວັນທີ 4/3/2016.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 636/ຫສນຍ.ກສສ, ລົງວັນທີ 5/5/2016.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 684/ຫສນຍ.ກລຂ, ລົງວັນທີ 17/5/2016.
- ອີງຕາມ ສະພາບລາຄາຊື້-ຂາຍນ້ຳມັນເຊື້ອໄຟຢູ່ຕະຫລາດໂລກໃນປະຈຸບັນໄດ້ມີການປ່ຽນແປງ ແລະ ເພື່ອໃຫ້ສອດຄ່ອງກັບກົນໄກຕະຫລາດ.

ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ແລະ ບັນດາບໍລິສັດນ້ຳມັນເຊື້ອໄຟໃຫ້ປັບລາຄາຂາຍຍ່ອຍນ້ຳມັນເຊື້ອໄຟເຂດເທດສະບານແຂວງ, ນະຄອນຫລວງ ດັ່ງນີ້:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫລວງວຽງຈັນ | 8,820 | 7,820 | 6,860 |
| 2 | ແຂວງຜົ້ງສາລີ | - | 8,550 | 7,590 |
| 3 | ແຂວງຫລວງນ້ຳທາ | - | 8,180 | 7,220 |
| 4 | ແຂວງອຸດົມໄຊ | - | 8,270 | 7,310 |
| 5 | ແຂວງບໍ່ແກ້ວ | 8,920 | 7,920 | 6,960 |
| 6 | ແຂວງຫລວງພະບາງ | 9,280 | 8,280 | 7,320 |
| 7 | ແຂວງໄຊຍະບູລີ | - | 8,220 | 7,260 |
| 8 | ແຂວງຫົວພັນ | - | 8,220 | 7,260 |
| 9 | ແຂວງຊຽງຂວາງ | - | 8,010 | 7,050 |
| 10 | ແຂວງວຽງຈັນ | 8,820 | 7,820 | 6,860 |
| 11 | ແຂວງບໍລິຄຳໄຊ | - | 7,940 | 6,980 |
| 12 | ແຂວງຄຳມ່ວນ | 8,850 | 7,850 | 6,890 |
| 13 | ແຂວງສະຫວັນນະເຂດ | 8,850 | 7,850 | 6,890 |
| 14 | ແຂວງສາລະວັນ | - | 8,030 | 7,070 |
| 15 | ແຂວງຈຳປາສັກ | 8,880 | 7,880 | 6,920 |
| 16 | ແຂວງເຊກອງ | - | 8,060 | 7,100 |
| 17 | ແຂວງອັດຕະປື | - | 8,060 | 7,100 |
| 18 | ແຂວງໄຊສົມບູນ | - | 8,060 | 7,100 |

- ລາຄາໃໝ່ນີ້ ໃຫ້ເລີ່ມປະຕິບັດ ວັນທີ 20/01/2017 ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ;
- ໃຫ້ບັນດາບໍລິສັດນໍ້າມັນເຊື້ອໄຟ ປະຕິບັດຕາມເນື້ອໃນ ຂ້າງເທິງນີ້ ຢ່າງເຂັ້ມງວດ ແລະ ຄຸ້ມຄອງປໍ້າຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ;
- ສ່ວນການຄິດໄລ່ເສັຍພາສີ, ອາກອນຊົມໃຊ້, ອາກອນມູນຄ່າເພີ່ມ(ອມພ), ກອງທຶນທາງ, ຄັງແຮ, ຄ່າກວດສອບຄຸນນະພາບນໍ້າມັນເຊື້ອໄຟ, ຄ່າບໍລິການ ອື່-ມິດເຕີ ແລະ ກໍາໄລຈາກຄ່າບໍລິການປໍ້າຂາຍຍ່ອຍແມ່ນໃຫ້ພາກສ່ວນກ່ຽວຂ້ອງຄິດໄລ່ເກັບຕາມໂຄງສ້າງທີ່ໄດ້ກໍານົດໄວ້ໃນໂຄງສ້າງລາຄານໍ້າມັນເຊື້ອໄຟຂອງຈຸດຕ່າງໆຕາມແຈ້ງການສະບັບນີ້ ຈົນກວ່າຈະມີການປ່ຽນແປງ;
- ແຈ້ງການສະບັບນີ້ ປ່ຽນແທນແຈ້ງການສະບັບເລກທີ 2262/ອຄ, ລົງວັນທີ 28 ທັນວາ 2016.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ລັດຖະມົນຕີ

ກະຊວງອຸດສາຫະກໍາ ແລະ ການຄ້າ
ລັດຖະມົນຕີ

ນ ເຂັມມະນີ ພົນເສນາ

ບ່ອນສົ່ງ

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ)
- ຫ້ອງວ່າການລັດຖະບານ (ໃຊ້ຕາງລາຍງານ)
- ຫ້ອງການ ກະຊວງການເງິນ (ເພື່ອຊາບ)
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ)
- ກົມພາສີ, ກົມສ່ວຍສາອາກອນ, ກົມນະໂຍບາຍການເງິນແລະ ກົມງົບປະມານ ກະຊວງການເງິນ (ເພື່ອຊາບ ແລະ ໃຫ້ຄວາມຮ່ວມມື)
- ກອງທຶນບູລະນະທາງຫຼວງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ)
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ)
- ກົມມາດຕະຖານ ແລະ ວັດແທກ, ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ (ເພື່ອຊາບ)
- ບັນດາກົມທີ່ກ່ຽວຂ້ອງອ້ອມຂ້າງກະຊວງ ອຄ (ເພື່ອຊາບ ແລະຕິດຕາມ)
- ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ທົ່ວປະເທດ (ເພື່ອຊາບ ແລະ ຕິດຕາມ)